ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ກະຊວງສາທາລະນະສຸກ ເລກທີ 518/ກຊສ

ນະຄອນຫຼວງວຽງຈັນ, ວັນທີ 18 ມີນາ 2009

# ຂໍ້ຕົກລົງວ່າດ້ວຍຫຼັກການພື້ນຖານ ໃນການນຳໃຊ້ມາດຕະການສຸຂະອະນາໄມ ແລະ ເຕັກນິກ ເພື່ອຄຸ້ມຄອງຄວາມປອດໄພຂອງອາຫານ

- ອີງຕາມ ກົດໝາຍວ່າດ້ວຍອາຫານ ສະບັບເລກທີ 04/ສພຊ, ລົງວັນທີ 15 ພຶດສະພາ 2004;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 114/ນຍ, ລົງວັນທີ 4 ກໍລະກົດ 2008;
- ອີງຕາມ ການສະເໜີຂອງກົມອາຫານ ແລະ ຢາ.

**ລັດຖະມົນຕີວ່າການກະຊວງສາທາລະນະສຸກອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການພື້ນຖານ ແລະ ວິທີການໃນການນຳໃຊ້ມາດຕະການສຸຂະອະນາໄມ ແລະ ເຕັກນິກໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາການດຳເນີນກິດຈະການ ແລະ ທຸລະກິດອາຫານ ແນໃສ່ສົ່ງເສີມຄຸນນະພາບ, ຮັບປະກັນມາດຕະຖານ ແລະ ຄວາມປອດໄພຂອງອາຫານ ເພື່ອປົກປ້ອງສຸຂະພາບ ແລະ ຊີວິດຂອງຜູ້ບໍລິໂພກ. ພ້ອມກັນນັ້ນ ກໍ່ເພື່ອເປັນການສົ່ງເສີມທຸລະກິດອາຫານ ໃຫ້ມີການພັດທະນາ ແລະ ຂະຫຍາຍຕົວ ໂດຍໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ ໃນການເຊື່ອມໂຍງເສດຖະກິດກັບສາກົນ.

**ມາດຕາ 2. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຂອບເຂດການນຳໃຊ້ໃນທຸກມາດຕະການສຸຂະອະນາໄມ ແລະ ເຕັກນິກຕໍ່ກິດຈະການ ແລະ ທຸລະກິດອາຫານ ເພື່ອປົກປ້ອງສຸຂະພາບ ແລະ ຊີວິດຂອງຜູ້ບໍລິໂພກ.

**ມາດຕາ 3. ຄວາມໝາຍຂອງຄຳສັບ**

- **ມາດຕະການສຸຂະອະນາໄມ:** ໝາຍເຖິງທຸກມາດຕະການທີ່ນຳໃຊ້ເພື່ອປົກປ້ອງສຸຂະພາບ ແລະ ຊີວິດຂອງຄົນເຮົາ ຈາກຄວາມສ່ຽງທີ່ຈະເກີດຂຶ້ນຈາກທາດເພີ່ມໃສ່ອາຫານ, ສານປົນເປື້ອນ, ທາດເບື່ອ ຫຼື ບັນດາເຊື້ອພະຍາດທີ່ກໍ່ໃຫ້ເກີດອາຫານເປັນພິດ.

- **ມາດຕະການເຕັກນິກ:** ໝາຍເຖິງທຸກມາດຕະການດ້ານເຕັກນິກທີ່ນຳໃຊ້ເຂົ້າໃນການຄຸ້ມຄອງ, ກວດກາການຜະລິດ, ການປຸງແຕ່ງ, ການນຳເຂົ້າ, ການບັນຈຸມັດທໍ່ ແລະ ໃສ່ສະຫຼາກອາຫານ, ລວມທັງການຄວບຄຸມ, ການກວດກາ ແລະ ຂັ້ນຕອນໃນການຮັບຮອງ ແລະ ຈຳໜ່າຍອາຫານໃນ ສປປ ລາວ.
- **ການປຸງແຕ່ງອາຫານ:** ໝາຍເຖິງການນຳເອົາວັດຖຸມາປະກອບປຸງແຕ່ງເປັນອາຫານ, ຊຶ່ງຕ້ອງຮັບປະກັນໃຫ້ມີຄວາມປອດໄພ, ອະນາໄມ ແລະ ມີຄຸນນະພາບ.
- **ການສ້າງສິ່ງກີດຂວາງທີ່ບໍ່ຈຳເປັນແກ່ກິດຈະການອາຫານ:** ໝາຍເຖິງການນຳໃຊ້ທຸກມາດຕະການ ໂດຍບໍ່ອີງໃສ່ຫຼັກການ ແລະ ພື້ນຖານວິທະຍາສາດມາເປັນຂໍ້ອ້າງ ເພື່ອສ້າງສິ່ງກີດຂວາງແກ່ກິດຈະການອາຫານ.
- **ການປະເມີນຄວາມສ່ຽງ:** ໝາຍເຖິງການຕີລາຄາຄວາມເປັນໄປໄດ້ຂອງຜົນກະທົບດ້ານລົບທີ່ຈະເກີດຂຶ້ນແກ່ສຸຂະພາບ ແລະ ຊີວິດຂອງຄົນຈາກການບໍລິໂພກ ຫຼື ນຳໃຊ້ຜະລິດຕະພັນອາຫານໃດໜຶ່ງໃນຊວງໄລຍະເວລາສະເພາະໃດໜຶ່ງ.
- **ທຸລະກິດອາຫານ:** ໝາຍເຖິງທຸລະກິດປຸງແຕ່ງອາຫານ, ທຸລະກິດຜະລິດອາຫານ, ທຸລະກິດບໍລິການອາຫານ, ທຸລະກິດການນຳເຂົ້າ-ສົ່ງອອກອາຫານ, ທຸລະກິດເກັບມ້ຽນອາຫານ, ທຸລະກິດຂົນສົ່ງອາຫານ ແລະ ທຸລະກິດຈຳໜ່າຍອາຫານ.
- **ທຸລະກິດຜະລິດອາຫານ:** ຫມາຍເຖິງການຜະລິດທາງດ້ານອຸດສາຫະກຳ ແລະ ຫັດຖະກຳຂອງອາຫານ, ລວມທັງການຜະລິດໃນລັກສະນະເສດຖະກິດຄອບຄົວ ເພື່ອຮັບໃຊ້ສັງຄົມພາຍໃນ ສປປ ລາວ ແລະ ສົ່ງອອກ.
- **ວຽກງານຕ່ອງໂສ້ຂອງອາຫານແບບເຊື່ອມສານ:** ໝາຍເຖິງວຽກງານການຄວບຄຸມຄວາມປອດໄພຂອງອາຫານ ຕະຫລອດທັງໝົດຕ່ອງໂສ້ຂອງອາຫານຈາກບ່ອນປູກລ້ຽງ ໄປເຖິງການບໍລິໂພກຊຶ່ງພົວພັນກັບທຸກຂະແໜງການທີ່ກ່ຽວຂ້ອງ.
- **ກິດຈະການອາຫານ:** ໝາຍເຖິງກິດຈະການຕ່າງໆກ່ຽວກັບອາຫານ ຊຶ່ງປະກອບດ້ວຍການຜະລິດເບື້ອງຕົ້ນ, ການປຸງແຕ່ງ, ການບໍລິການ, ການຜະລິດອຸດສະຫະກຳ ແລະ ຫັດຖະກຳ, ການເກັບຮັກສາ, ການຈຳໜ່າຍ, ການເກັບມ້ຽນ, ການຂົນສົ່ງ, ການນຳເຂົ້າ, ສົ່ງອອກ ແລະ ການບໍລິຈາກອາຫານ (ມາດຕາ 17 ຂອງກົດໝາຍວ່າດ້ວຍອາຫານ).

## ໝວດທີ II
## ຫຼັກການພື້ນຖານ
## ໃນການນຳໃຊ້ມາດຕະການສຸຂະອະນາໄມ ແລະ ເຕັກນິກ

### ມາດຕາ 4. ຫຼັກການພື້ນຖານ

ການນຳໃຊ້ມາດຕະການສຸຂະອະນາໄມ ແລະ ເຕັກນິກເຂົ້າໃນການຄຸ້ມຄອງຄວາມປອດໄພຂອງອາຫານ ຕ້ອງປະຕິບັດຕາມຫຼັກການພື້ນຖານດັ່ງລຸ່ມນີ້:

1) ຄວາມຈຳເປັນໃນການປົກປ້ອງສຸຂະພາບຂອງຜູ້ບໍລິໂພກ;
2) ປະຕິບັດຕາມມາດຕະຖານທີ່ໄດ້ກຳນົດໃນ ສປປ ລາວ;
3) ຮັບປະກັນຄວາມໂປ່ງໃສ;
4) ບໍ່ຈຳແນກໃນການປະຕິບັດ.

**ມາດຕາ 5. ຄວາມຈຳເປັນໃນການປົກປ້ອງສຸຂະພາບຂອງຜູ້ບໍລິໂພກ**

ໃນການປົກປ້ອງສຸຂະພາບ ແລະ ຊີວິດຂອງຜູ້ບໍລິໂພກ ຕ້ອງຮັບປະກັນໃຫ້ອາຫານມີອະນາໄມ ແລະ ຄວາມປອດໄພຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ແລະ 15 ຂອງກົດໝາຍວ່າດ້ວຍອາຫານ ແລະ ຕ້ອງຫຼີກເວັ້ນການສ້າງສິ່ງກີດຂວາງທີ່ບໍ່ຈຳເປັນແກ່ກິດຈະການອາຫານ ໂດຍບໍ່ໄດ້ອີງໃສ່ລະບຽບຫຼັກການ ແລະ ພື້ນຖານວິທະຍາສາດ.

**ມາດຕາ 6. ມາດຕະຖານທີ່ໄດ້ກຳນົດໃນ ສປປ ລາວ**

ອາຫານທີ່ຜະລິດ, ສົ່ງອອກ-ນຳເຂົ້າ ແລະ ຈຳໜ່າຍຕ້ອງປະຕິບັດຕາມມາດຕະຖານທີ່ ສປປລາວ ໄດ້ກຳນົດອອກໂດຍອີງໃສ່ມາດຕະຖານ, ຂໍ້ກຳນົດ ຫຼື ຄຳແນະນຳຂອງກົດລະຫັດອາຫານສາກົນ. ໃນກໍລະນີທີ່ມາດຕະຖານຂອງ ສປປ ລາວ ຫາກສູງກວ່າ ຫຼື ບໍ່ມີໃນມາດຕະຖານ, ຂໍ້ກຳນົດ ຫຼື ຄຳແນະນຳຂອງກົດລະຫັດອາຫານສາກົນ, ຕ້ອງມີການຊີ້ແຈງ ແລະ ອະທິບາຍບົນພື້ນຖານວິທະຍາສາດ.

**ມາດຕາ 7. ຄວາມໂປ່ງໃສ**

1. ທຸກມາດຕະການທີ່ຈະມີຜົນບັງຄັບໃຊ້ ຫຼື ມີການປ່ຽນແປງຕ້ອງມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ, ມີການເຜີຍແຜ່ ແລະ ແຈ້ງການເປັນລາຍລັກອັກສອນ ຜ່ານສື່ມວນຊົນຢ່າງທັນການ ເພື່ອໃຫ້ໜ່ວຍງານພາກລັດ, ພາກທຸລະກິດ, ປະຊາຊົນ ແລະ ປະເທດຄູ່ຄ້າທີ່ກ່ຽວຂ້ອງຮັບຊາບ. ໄລຍະເວລາຂອງການເຜີຍແຜ່ ແລະ ແຈ້ງການຄວນມີການກຳນົດອັນເໝາະສົມ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງມີເວລາກະກຽມໃນການຈັດຕັ້ງປະຕິບັດ, ຍົກເວັ້ນກໍລະນີສຸກເສີນ.
2. ພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ສະໜອງຂໍ້ມູນກ່ຽວກັບການນຳໃຊ້ມາດຕະການສຸຂະອະນາໄມ ແລະ ເຕັກນິກໃຫ້ສູນສະໜອງ (Enquiry Point) ແລະ ສູນແຈ້ງການ (Notification Point) ຂໍ້ມູນສຸຂະອະນາໄມພືດ ແລະ ສັດ ແລະ ມາດຕະການເຕັກນິກທີ່ເປັນສິ່ງກີດຂວາງຕໍ່ການຄ້າ (SPS/TBT).
3. ທຸກມາດຕະການ, ແບບຟອມ, ຂັ້ນຕອນ, ໄລຍະເວລາ, ຄ່າທຳນຽມ ແລະ ຂໍ້ມູນອື່ນໆທີ່ຈຳເປັນແກ່ການປະກອບກິດຈະການ ແລະ ທຸລະກິດອາຫານຕ້ອງມີການເຜີຍແຜ່ ແລະ ແຈ້ງການຢ່າງເໝາະສົມ, ພ້ອມທັງຕິດປະກາດໄວ້ໃນສະຖານທີ່ບໍລິການ ເພື່ອຄວາມສະດວກແກ່ຜູ້ປະກອບກິດຈະການອາຫານ ແລະ ທຸລະກິດອາຫານ.

**ມາດຕາ 8. ການບໍ່ຈຳແນກໃນການປະຕິບັດ**

ມາດຕະການສຸຂະອະນາໄມ ແລະ ເຕັກນິກ ຕ້ອງຮັບປະກັນຫຼັກການບໍ່ຈຳແນກໃນການປະຕິບັດ ຊຶ່ງແມ່ນການກຳນົດ ແລະ ຈັດຕັ້ງປະຕິບັດລະບຽບຫຼັກການ ທີ່ມີຄວາມສະເໝີພາບລະຫວ່າງບັນດາປະເທດ ຫຼື ບັນດາຜູ້ດຳເນີນທຸລະກິດອາຫານ.

## ໝວດທີ III
## ວຽກງານຄຸ້ມຄອງຄວາມປອດໄພຂອງອາຫານ

**ມາດຕາ 9. ການຮັບປະກັນຄວາມປອດໄພຂອງອາຫານ**

ວຽກງານຮັບປະກັນຄວາມປອດໄພຂອງອາຫານໃນ ສປປ ລາວ ປະກອບດ້ວຍການຄຸ້ມຄອງ, ຕິດຕາມ, ກວດກາ, ສ້າງນິຕິກຳ, ວິເຄາະຄວາມສ່ຽງ, ວຽກງານຕ່ອງໂສ້ຂອງອາຫານແບບເຊື່ອມສານ, ສ້າງຄວາມ

ສາມາດຂອງບຸກຄະລາກອນ, ວຽກງານເກັບກຳຂໍ້ມູນ ແລະ ຄົ້ນຄວ້າວິທະຍາສາດ, ວຽກງານມາດຕະຖານສາກົນ ແລະ ການຄ້າ, ວຽກງານການຮ່ວມມືພາຍໃນ ແລະ ສາກົນ, ຊຶ່ງທັງໝົດນີ້ໃຫ້ສອດຄ່ອງກັບນະໂຍບາຍວ່າດ້ວຍຄວາມປອດໄພຂອງອາຫານ.

**ມາດຕາ 10. ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມປອດໄພຂອງອາຫານ**

ວຽກງານຄຸ້ມຄອງຄວາມປອດໄພຂອງອາຫານໃນ ສປປລາວ ຕ້ອງອີງໃສ່ນະໂຍບາຍວ່າດ້ວຍຄວາມປອດໄພຂອງອາຫານ ແລະ ກົດໝາຍວ່າດ້ວຍອາຫານ, ລວມທັງນິຕິກຳຕ່າງໆທີ່ກ່ຽວຂ້ອງກັບອາຫານທີ່ໄດ້ນຳໃຊ້ແລ້ວເປັນບ່ອນອີງໃນການເຄື່ອນໄຫວຈັດຕັ້ງປະຕິບັດ.

ໃນກໍລະນີ ການເຄື່ອນໄຫວຈັດຕັ້ງປະຕິບັດດັ່ງກ່າວຫາກຂັດ ຫຼື ບໍ່ໄດ້ກວມລວມເອົາຫຼັກການພື້ນຖານທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງນີ້, ໃຫ້ຖືເອົາຂໍ້ຕົກລົງສະບັບນີ້ເປັນບ່ອນອີງໃນການເຄື່ອນໄຫວຈັດຕັ້ງປະຕິບັດ.

**ມາດຕາ 11. ການປະເມີນຄວາມສ່ຽງ**

ມາດຕະການຄວາມປອດໄພຂອງອາຫານ ຕ້ອງອີງໃສ່ພື້ນຖານການປະເມີນຄວາມສ່ຽງທີ່ເໝາະສົມ ແລະ ສອດຄ່ອງກັບສາກົນ ຫຼື ພາກພື້ນ, ທັງຮັບປະກັນຄວາມໂປ່ງໃສ ແລະ ຫຼັກການບໍ່ຈຳແນກໃນການປະຕິບັດ.

**ມາດຕາ 12. ການຮັບຮູ້ມາດຕະຖານອາຫານຂອງຕ່າງປະເທດ**

ສປປ ລາວ ຮັບຮູ້ມາດຕະຖານອາຫານຂອງປະເທດທີ່ມີກົດໝາຍ ແລະ ລະບຽບການທີ່ໄດ້ຮັບຮອງເອົາມາດຕະຖານຂອງກົດລະຫັດອາຫານສາກົນ (Codex Alimentarius).

ໃນກໍລະນີທີ່ອາຫານບໍ່ບັນລຸຕາມມາດຕະຖານຂ້າງເທິງນັ້ນແມ່ນສາມາດປະຕິເສດໄດ້.

## ໝວດທີ IV
## ສິດ ແລະ ໜ້າທີ່ຂອງຂະແໜງການສາທາລະນະສຸກ

**ມາດຕາ 13. ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ**

ໃນການນຳໃຊ້ມາດຕະການສຸຂະອະນາໄມ ແລະ ເຕັກນິກເຂົ້າໃນວຽກງານຄວາມປອດໄພຂອງອາຫານ, ກະຊວງສາທາລະນະສຸກນອກຈາກມີສິດ ແລະ ໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ແລ້ວ ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມດັ່ງນີ້:

1) ຜັນຂະຫຍາຍເນື້ອໃນຈິດໃຈຂອງຫຼັກການພື້ນຖານໃນມາດຕາ 4 ເຂົ້າໃນຂົງເຂດວຽກງານຮັບປະກັນຄວາມປອດໄພອາຫານໃນ ສປປ ລາວ.
2) ຕິດຕາມ, ສັງລວມ, ຕີລາຄາ ແລະ ປະເມີນຜົນການນຳໃຊ້ຫຼັກການພື້ນຖານທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ພ້ອມທັງມີສິດໃນການປັບປຸງ ແລະ ດັດແກ້ນິຕິກຳດ້ານອາຫານທີ່ບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້.
3) ປະສານກັບຂະແໜງການອື່ນໆທີ່ກ່ຽວຂ້ອງ ເພື່ອຮັບປະກັນການນຳໃຊ້ຫຼັກການພື້ນຖານ ໃນຂໍ້ຕົກລົງສະບັບນີ້ເຂົ້າໃນວຽກງານຮັບປະກັນຄວາມປອດໄພຂອງອາຫານ, ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 1 ຂອງນະໂຍບາຍວ່າດ້ວຍຄວາມປອດໄພຂອງອາຫານ.

4) ພົວພັນ, ຮ່ວມມື ແລະ ເຈລະຈາໃນຂົງເຂດວຽກງານການນຳໃຊ້ມາດຕະການສຸຂະອະນາໄມ ແລະ ເຕັກນິກທີ່ກ່ຽວກັບທຸລະກິດອາຫານ ທັງພາຍໃນ ແລະ ສາກົນ.
5) ເຜີຍແຜ່ຫຼັກການພື້ນຖານໃນຂໍ້ຕົກລົງສະບັບນີ້ ໃຫ້ຂະແໜງການທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ໃຫ້ຮັບຮູ້ ແລະ ເຂົ້າໃຈ ເພື່ອສ້າງຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

**ມາດຕາ 14. ສິດ ແລະ ໜ້າທີ່ຂອງພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ**

ພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ ນອກຈາກມີສິດ ແລະ ມີໜ້າທີ່ຕາມພາລະບົດບາດຂອງຕົນແລ້ວ, ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມດັ່ງລຸ່ມນີ້:

1) ຈັດຕັ້ງປະຕິບັດ, ຕິດຕາມ, ກວດກາ ແລະ ສັງລວມການນຳໃຊ້ຫຼັກການພື້ນຖານທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ແລ້ວລາຍງານໃຫ້ກະຊວງສາທາລະນະສຸກຮັບຊາບເປັນປະຈຳ.
2) ເຜີຍແຜ່ຫຼັກການພື້ນຖານໃນຂໍ້ຕົກລົງສະບັບນີ້ໃຫ້ແກ່ ພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ທີ່ຢູ່ພາຍໃຕ້ສິດ ແລະ ອຳນາດຂອງຕົນຮັບຮູ້ ແລະ ເຂົ້າໃຈ.
3) ປະສານກັບຂະແໜງການອື່ນທີ່ກ່ຽວຂ້ອງພາຍໃນແຂວງ ເພື່ອຮັບປະກັນການນຳໃຊ້ຫຼັກການພື້ນຖານໃນຂໍ້ຕົກລົງສະບັບນີ້ ເຂົ້າໃນວຽກງານຮັບປະກັນຄວາມປອດໄພຂອງອາຫານ.
4) ມີສິດ ແລະ ໜ້າທີ່ຕາມການຊີ້ນຳຂອງກະຊວງສາທາລະນະສຸກ ໃນການນຳໃຊ້ມາດຕະການສຸຂະອະນາໄມ ແລະ ເຕັກນິກເຂົ້າໃນວຽກງານຮັບປະກັນຄວາມປອດໄພຂອງອາຫານ.

**ມາດຕາ 15. ສິດ ແລະ ໜ້າທີ່ຫ້ອງການສາທາລະນະສຸກເມືອງ**

ຫ້ອງການສາທາລະນະສຸກເມືອງ, ນອກຈາກມີສິດ ແລະ ມີໜ້າທີ່ຕາມພາລະບົດບາດຂອງຕົນແລ້ວ, ຍັງມີສິດ ແລະ ໜ້າທີ່ ໃນການຈັດຕັ້ງປະຕິບັດການນຳໃຊ້ຫຼັກການພື້ນຖານທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້, ແລ້ວລາຍງານໃຫ້ພະແນກສາທາລະນະສຸກແຂວງຮັບຊາບເປັນແຕ່ລະໄລຍະ.

## ໝວດທີ V
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 16. ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງປະກອບດ້ວຍ 3 ຂັ້ນຕອນດັ່ງນີ້:

1. ການປຶກສາຫາລື;
2. ການຮ້ອງຮຽນ;
3. ການຮ້ອງຟ້ອງ.

**ມາດຕາ 17. ການປຶກສາຫາລື**

ທຸກຂໍ້ຂັດແຍ່ງທີ່ຕິດພັນກັບຂໍ້ຕົກລົງສະບັບນີ້, ທຸກຝ່າຍທີ່ກ່ຽວຂ້ອງສາມາດສະເໜີໃຫ້ມີການປຶກສາຫາລື ເພື່ອຫາເຫດຜົນ ແລະ ສ້າງຄວາມເຂົ້າໃຈເຊິ່ງກັນ ແລະ ກັນ. ແຕ່ລະຝ່າຍຄວນໃຫ້ເວລາທີ່ເໝາະສົມໃນການສະໜອງຂໍ້ມູນອັນຈຳເປັນເພື່ອຄວາມສະດວກແກ່ການປຶກສາຫາລືດັ່ງກ່າວ.

**ມາດຕາ 18. ການຮ້ອງຮຽນ**

ຜ່ານການປຶກສາຫາລືແລ້ວ, ຫາກຍັງບໍ່ສາມາດແກ້ໄຂໄດ້. ໂຈດສາມາດຍື່ນຂໍ້ຮ້ອງຮຽນຕໍ່ຂະແໜງການສາທາລະນະສຸກ ຫຼື ຂະແໜງການອື່ນໆທີ່ກ່ຽວຂ້ອງສູງກວ່ານັ້ນໄດ້, ແຕ່ຕ້ອງໃຫ້ຄວາມເປັນທຳ ແລະ ພິຈາລະນາແກ້ໄຂຂໍ້ຂັດແຍ່ງດັ່ງກ່າວພາຍໃນໄລຍະເວລາ 90 ວັນ.

**ມາດຕາ 19. ການຮ້ອງຟ້ອງ**

ໃນກໍລະນີທີ່ຝ່າຍໃດຝ່າຍໜຶ່ງ ຫາກບໍ່ພໍໃຈກັບການແກ້ໄຂຂໍ້ຮ້ອງຮຽນ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 18, ສາມາດຮ້ອງຟ້ອງຕໍ່ສານໄດ້ຕາມລະບຽບກົດໝາຍ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 20. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເປັນເຈົ້າການໃນການຜັນຂະຫຍາຍ ແລະ ສົມທົບກັບບັນດາພະແນກສາທາລະນະສຸກແຂວງ, ນະຄອນຫລວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ປະກົດຜົນເປັນຈິງ.

**ມາດຕາ 21. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງ 30 ວັນນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ຂໍ້ຕົກລົງ ແລະ ລະບຽບການສະບັບໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ຕ້ອງອີງໃສ່ມາດຕາ 10 ວັກ 2 ຂອງຂໍ້ຕົກລົງສະບັບນີ້ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ປັບປຸງ.

**ລັດຖະມົນຕີວ່າການກະຊວງສາທາລະນະສຸກ**

ກະຊວງສາທາລະນະສຸກ

ລັດຖະມົນຕີ

ຮສ. ປອນເມກ ດາລາລອຍ